# ພາລະບົດບາດ ຂອງ

# ກົມຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ

ກະກຽມໂດຍ: ກົມຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ, ກຊສ

# ຫົວຂໍ້ສະເໜີ

1. ທີ່ຕັ້ງ ແລະ ພາລະບົດບາດ

2. ໜ້າທີ່

# ທີ່ຕັ້ງ ແລະ ພາລະບົດບາດ

ກົມຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ ຂຽນເປັນຕົວອັກສອນ ຫຍໍ້ວ່າ "ກພປ" ແມ່ນການຈັດຕັ້ງໜຶ່ງ ທີ່ສັງກັດໃນໂຄງປະກອບກົງຈັກ ການຈັດຕັ້ງຂອງກະຊວງຊັບ ພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ມີພາລະບົດບາດເປັນເສນາທິການໃຫ້ແກ່ ຄະນະນຳ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກ່ຽວກັບວຽກງານ ການຄຸ້ມຄອງໄພພິບັດທຳມະຊາດ ແລະການປ່ຽນແປງດິນຟ້າອາກາດ ໃນຂອບເຂດທົ່ວປະເທດ.

# ໜ້າທີ

1. ປະສານສົມທົບກັບບັນດາຂະແໜງການ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງໃນສັງຄົມ ທັງໃນລະດັບ ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ໃນການຄົ້ນຄ້ວາຮ່າງ ແລະ ປັບປຸງນະໂຍບາຍ, ຍຸດທະສາດ, ແຜນງານ, ແຜນການ ແລະ ບັນດານິຕິກຳຕ່າງໆ ທີ່ພົວພັນກັບການຄຸ້ມຄອງໄພພິບັດທຳມະຊາດ ແລະ ການປ່ຽນແປງດິນຟ້າອາກາດ ນຳສະເໜີຕໍ່ຂັ້ນເທິງເພື່ອພິຈາລະນາຮັບຮອງ ແລະ ປະກາດໃຊ້, ພ້ອມທັງເປັນໃຈກາງປະສານງານໃນການຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາ;
2. ເຊື່ອມສານເອົາບັນຫາ ການຄຸ້ມຄອງໄພພິບັດທຳມະຊາດ ແລະ ການປ່ຽນແປງດິນຟ້າອາກາດ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ລວມທັງແຜນພັດທະນາຂອງບັນດາຂະແໜງ ການ ໆໆ;

# ໜ້າທີ່ (ຕໍ່)

3. ເກັບກຳ,ວິເຄາະ,ສ້າງຖານຂໍ້ມູນ, ຄຸ້ມຄອງ ແລະ ສະໜອງຂໍ້ມູນ-ຂ່າວສານ ກ່ຽວກັບ ການຄຸ້ມຄອງໄພພິບັດທຳມະຊາດ ແລະ ການປ່ຽນແປງດິນຟ້າອາກາດ,ພ້ອມທັງ ສ້າງບົດລາຍງານສະພາບໄພພິບັດທຳມະຊາດ ແລະ ບົດສັງລວມແຫ່ງຊາດດ້ານການປ່ຽນແປງດິນຟ້າອາກາດ ໃຫ້ເປັນແຕ່ລະໄລຍະ;

4. ຄົ້ນຄວ້າ,ພິຈາລະນາ ແລະ ນຳສະເໜີຂັ້ນເທິງອະນຸມັດ ຕາການສະ ເໜີ ຂໍສ້າງຕັ້ງສະມາຄົມທີ່ພົວພັນກັບວຽກງານຄຸ້ມຄອງໄພພິບັດທຳມະຊາດ ແລະ ການປ່ຽນແປງດິນຟ້າອາກາດ,ພ້ອມທັງ ຄຸ້ມຄອງ ຕິດຕາມກວດກາ, ຕີລາຄາ ແລະ ປະເມີນຜົນ ການເຄື່ອນໄຫວຂອງບັນດາສະມາຄົມດັ່ງກ່າວ;

5. ຄຸ້ມຄອງ,ສົ່ງເສີມ ແລະ ຄົ້ນຄ້ວານຳສະເໜີຂັ້ນເທິງພິຈາລະນາຮັບຮອງເອົາໂຄງການກົນໄກ ການພັດທະນາສະອາດ ແລະ ໂຄງການອື່ນໆທີ່ເປັນການຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວ ພາຍໃຕ້ສົນທິສັນຍາວ່າດ້ວຍການປ່ຽນແປງດິນຟ້າອາກາດ ແລະ ອະນຸ

# ໜ້າທີ (໓)

6.ກໍ່ສ້າງ ແລະ ຍົກລະດັບຄວາມຮູ້, ຄວາມສາມາດ ຂອງການຈັດຕັ້ງ ແລະ ບຸກຄະລາກອນ ກພປ ລວມທັງ ບັນດາຂະແໜງການ ທີ່ກ່ຽວຂ້ອງໃນຂັ້ນສູນກາງ ແລະ ທ້ອງຖິ່ນ ທີ່ຕິດພັນກັບການຄຸ້ມຄອງໄພພິບັດທຳມະຊາດ ແລະ ການປ່ຽນແປງດິນຟ້າອາກາດ, ພ້ອມທັງ ຕັ້ງໜ້າເຂົ້າຮ່ວມກັບບັນດາ ຂະແໜງການທີ່ກ່ຽວຂ້ອງ ໃນການນຳເອົາບັນຫາທີ່ຕິດພັນ ກັບຂົງເຂດການຄຸ້ມຄອງໄພພິບັດທຳ ມະຊາດ ແລະ ການປ່ຽນແປງດິນຟ້າອາກາດ ເຂົ້າໃນລະບົບຫລັກສູດ ການຮຽນ-ການສອນ ແລະ ທັງເປັນເຈົ້າການສ້າງຈິດສຳນຶກໃຫ້ແກ່ມວນຊົນ ແລະ ສ້າງຂະບວນການຕ່າງໆທີ່ກ່ຽວຂ້ອງ ໃນທົ່ວສັງຄົມ;

7. ປຸກລະດົມ ແລະ ຂົນຂວາຍ ການຈັດຕັ້ງ, ນິຕິບຸກຄົນ, ບຸກຄົນ ກໍ່ຄືທຸກພາກສ່ວນ ໃນສັງຄົມ ໃຫ້ມີສ່ວນຮ່ວມ ແລະ ປະກອບສ່ວນ ການສະໜັບສະ ໜູນ ດ້ານການເງິນ, ພາຫະນະ, ອຸປະກອນ, ວັດຖຸສິ່ງຂອງ, ເຫຼືອແຮງ ແລະ ສະຕິປັນຍາ ສຳລັບວຽກງານ ການຄຸ້ມຄອງໄພພິບັດທຳມະຊາດ ແລະ ການປ່ຽນແປງດິນຟ້າອາກາດ;

# ໜ້າທີ່ (ຕໍ່)

8. ເປັນກອງເລຂາ ໃຫ້ແກ່ຄະນະກຳມະການ ປ້ອງກັນ ແລະ ຄວບຄຸມໄພພິບັດແຫ່ງຊາດ ແລະ ຄະນະກຳມະການ ຊີ້ນຳ ລະດັບຊາດ ດ້ານການປ່ຽນແປງດິນຟ້າອາກາດ ແລະ ຄະນະກຳມະການ ລະດັບຊາດອື່ນໆທີ່ກ່ຽວຂ້ອງ ຕາມການມອບໝາຍຂອງຂັ້ນເທິງ;

9. ພົວພັນ, ຮ່ວມມືກັບຕ່າງປະເທດ ແລະ ບັນດາອົງ

# ໂຄງປະກອບການຈັດຕັ້ງ




1. ພະແນກ ກຽມພ້ອມ-ຕອບໂຕ້ ໄພພິບັດ
2. ພະແນກ ກອງເລຂາ
3. ພະແນກ ຂໍ້ມູນຂ່າວສານ-ປະຊາສຳພັນ
4. ພະແນກ ບໍລິຫານ-ແຜນການ
5. ພະແນກ ຄຸ້ມຄອງ-ປະສານງານ
6. ພະແນກ ຫຼຸດຜ່ອນ ອາຍພິດເຮືອນແກ້ວ
7. ພະແນກ ປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ

